ສຳນັກງານໃຫຍ່

ເລກທີ: 07 /ທຄຕລ 2023
ນະຄອນຫຼວງວຽງຈັນ, ວັນທີ: 22 MAR 2023

ມະຕິ
ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ
ຄັ້ງທີ 1 ປະຈຳປີ 2023, ວັນທີ 21/03/2023

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນຄັ້ງທີ 1 ປະຈຳປີ 2023 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 13:30-16:30 ໂມງ ວັນທີ 21 ມີນາ 2023 ທີ່ ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ຄຳສຸກ ສຸນດາລາ ຮັກສາການປະທານສະພາບໍລິຫານ, ມີ ສະມາຊິກສະພາບໍລິຫານເຂົ້າຮ່ວມຄົບ 8 ທ່ານ (ໃນນັ້ນ, ສະມາຊິກສະພາບໍລິຫານຈາກຜູ້ຖືຮຸ້ນຍຸດທະສາດ ແມ່ນຜູ້ຕາງໜ້າເຂົ້າຮ່ວມ) ມີຄະນະອຳນວຍການ ແລະ ພະແນກທີ່ກ່ຽວຂ້ອງເຂົ້າຮ່ວມເປັນຜູ້ສັງເກດການ.

ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:

1. ຮັບຮອງການຈັດສັນກຳໄລປະຈຳປີ 2022 ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນຮັບຮອງດັ່ງນີ້:
   - ແບ່ງເຂົ້າຄັງສະສົມຕາມລະບຽບການ: **10%**;
   - ຈ່າຍເງິນປັນຜົນ: **100 ກີບ/ຮຸ້ນ**;
   - ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;
   - ມື້ຈ່າຍເງິນປັນຜົນ: **12/05/2023.**
2. ຮັບຮອງການແຕ່ງຕັ້ງປະທານສະພາບໍລິຫານ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນຮັບຮອງ;
3. ຮັບຮອງແຜນການປະຈຳປີ 2023 ຂອງ ທຄຕລ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນຮັບຮອງ;
4. ຮັບຮອງຜູ້ກວດສອບອິດສະຫຼະ ປະຈຳປີ 2023 ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນຮັບຮອງ;
5. ຮັບຮອງມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນ: **21/04/2023**;
6. ຮັບຮອງການສະເໜີຂໍກູ້ຢືມທີ່ຂຶ້ນກັບສິດພິຈາລະນາຂອງສະພາບໍລິຫານ ຈຳນວນ 2 ລາຍການ.

ຮັກສາການ ປະທານສະພາບໍລິຫານ

ຄຳສຸກ ສຸນດາລາ